IMPERIAL BRANDS

# ໃຫ້ຄຳໝັ້ນສັນຍາຮ່ວມກັນກັບຫຼັກການປະຕິບັດທາງທຸລະກິດເພື່ອປົກປ້ອງບຸກຄະລາກອນ ແລະ ໂລກຂອງພວກເຮົາ



ກົດການປະພຶດຂອງອິມພີຣຽວສຳລັບຜູ້ສະໜອງ | 15/08/2023

ກົດການປະພຶດສຳລັບ
ຜູ້ສະໜອງຂອງພວກເຮົາ

# ຜູ້ສະໜອງຂອງພວກເຮົາ
# *ກົດການປະພຶດ*

**ຢູ່ທີ່ອິມພິຣຽວແບຣນ, ຊື່ສຽງທົ່ວໂລກຂອງພວກເຮົາ ທັງເປັນຄູ່ຮ່ວມງານທີ່ໜ້າເຊື່ອຖືໄດ້ ແລະ ເປັນຜູ້ຈ້າງທີ່ມີຈັນຍາບັນ ເຊິ່ງແມ່ນໜຶ່ງໃນຊັບສິນບັດທີ່ມີຄ່າທີ່ສຸດຂອງພວກເຮົາ.**

ພວກເຮົາມຸ່ງໝັ້ນທີ່ຈະດຳເນີນການຢ່າງມີຄວາມຮັບຜິດຊອບໃນທຸກສິ່ງທີ່ພວກເຮົາເຮັດ, ເຄົາລົບຄົນຂອງເຮົາ, ຊຸມຊົນຂອງເຮົາ ແລະ ໂລກຂອງເຮົາ. ພວກເຮົາມີເປົ້າໝາຍທີ່ມຸ້ງໝັ້ນຢູ່ແລ້ວ ເພື່ອຮັບປະກັນວ່າພວກເຮົາບັນລຸຄວາມໄຝ່ຝັນເຫຼົ່ານັ້ນ ແລະ ສ່ວນໜຶ່ງຂອງຄຳໝັ້ນສັນຍານັ້ນແມ່ນເຮັດວຽກກັບຜູ້ສະໜອງທີ່ໜ້າເຊື່ອຖືໃນແຫຼ່ງຜະລິດຕະພັນ ແລະ ການບໍລິການໃນທາງທີ່ສອດຄ່ອງ, ຍືນຍົງ ແລະ ຮັບຜິດຊອບສັງຄົມ.

ກົດການປະພຶດສຳລັບຜູ້ສະໜອງນີ້ ແມ່ນໄດ້ກຳນົດມາດຕະຖານຂັ້ນພື້ນຖານຂອງພຶດຕິກຳທີ່ພວກເຮົາຄາດຫວັງຈາກຜູ້ສະໜອງທັງໝົດຂອງອິມພິຣຽວ. ມັນໄດ້ອັບເດດໃນປີ 2023 ເພື່ອສະທ້ອນໃຫ້ເຫັນເຖິງຄຳໝັ້ນສັນຍາທີ່ຍືນຍົງທີ່ພວກເຮົາທີ່ເປັນສ່ວນໜຶ່ງຂອງແຜນຍຸດທະສາດທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ການຄຸ້ມຄອງ.

ຄວາມໄຝ່ຝັນຂອງພວກເຮົາບໍ່ໄດ້ຢຸດຢູ່ທີ່ມາດຕະຖານຂັ້ນພື້ນຖານ. ພວກເຮົາຈະຊອກວິທີແກ້ໄຂກິດຈະກຳທີ່ພວກເຮົາຄິດວ່າລະເມີດກົດລະບຽບ ແລະ ພວກເຮົາຊຸກຍູ້ໃຫ້ຜູ້ສະໜອງຂອງພວກເຮົາທັງໝົດຊອກຫາໂອກາດ ນອກເໜືອຈາກສິ່ງທີ່ຄາດຫວັງໄວ້ທີ່ລະບຸໄວ້ໃນກົດລະບຽບນີ້ ເພື່ອໃຫ້ພວກເຮົາສາມາດຮ່ວມກັນສ້າງຜົນກະທົບດ້ານບວກທາງສັງຄົມ ແລະ ສິ່ງແວດລ້ອມ.

ພວກເຮົາຍັງສອບຖາມວ່າ ຖ້າຫາກທ່ານມີຂໍ້ກັງວົນໃດໆ ຫຼື ຂໍ້ສົງໄສທີ່ລະເມີດລະບຽບກົດໝາຍ, ຂໍໃຫ້ທ່ານເວົ້າອອກມາ. ທ່ານສາມາດຕິດ ຕໍ່ ພວກເຮົາໄດ້ທີ່:

ອິມພິຣຽວ, 121 ຖະໜົນ **Winterstoke Road, Bristol BS3 2LL,**
ປະເທດ **United Kingdom**
**Tel: +44 (0) 117 963 6636**
**Email:[SpeakUp@impbrands.com](mailto:SpeakUp@impbrands.com)**

ອິມພິຣຽວ ITG Brands ຕໍ່ສາຍລາຍງານ :

ເວົ້າອອກມາ **ITG Brands Speaking Up 714**
**ຖະໜົນ Green Valley Road Greensboro,**
**NC 27408**
**Tel: +1 866 447 6092**

ຫຼື, ຍົກບັນຫາຂຶ້ນມາຢ່າງປິດລັບໂດຍການໃຊ້ບໍລິການສາຍດ່ວນອອນລາຍ **Speaking Up** service.

ພວກເຮົາມຸ້ງໝັ້ນຕໍ່ກັບການເດີນທາງນີ້ ແລະ ສ້າງຄວາມແຕກຕ່າງໃນແງ່ບວກ. ມາຮ່ວມກັບພວກເຮົາ.

**ຈາເວີ ເຣີຕ້າ**
**ຫົວໜ້າຝ່າຍສະໜອງ**



# ການແນະນຳ

**ກົດການປະພຶດຂອງຜູ້ສະໜອງຂອງພວກເຮົາ ("ກົດລະບຽບ") ແມ່ນໄດ້ກຳນົດມາດຕະຖານນຂອງພຶດຕິກຳທີ່ພວກເຮົາຄາດຫວັງຈາກບັນດາຜູ້ສະໜອງຂອງອິນພີຣຽວ - ບັນດາບໍລິສັດເຫຼົ່ານັ້ນ, ຜູ້ສະໜອງການບໍລິການ ແລະ ຄູ່ຮ່ວມທຸລະກິດທີ່ມີສ່ວນຮ່ວມໃນການສ້າງສຳພັນທາງທຸລະກິດກັບອິນພີຣຽວ ແລະ ສາຂາທຸລະກິດຂອງເຮົາ.**

ກົດລະບຽບແມ່ນໄດ້ລະບຸຫຼັກການຄວາມຮັບຜິດຊອບຂອງພວກເຮົາທີ່ໄດ້ກຳນົດໄວ້ຂ້າງລຸ່ມນີ້ ແລະ ບົ່ງບອກວິທີທີ່ພວກເຮົາເຮັດວຽກກັບບັນດາຜູ້ສະໜອງ ເພື່ອຈັດຫາຜະລິດຕະພັນ ແລະ ການບໍລິການໃນທາງທີ່ສອດຄ່ອງ, ຍືນຍົງ ແລະ ຮັບຜິດຊອບສັງຄົມ.

### ກົດລະບຽບແມ່ນລວມມີ 3 ຂົງເຂດດັ່ງນີ້:

1. **ຄວາມຊື່ສັດທາງທຸລະກິດ** – ຜູ້ສະໜອງຂອງພວກເຮົາແມ່ນຖືກຄາດຫວັງເພື່ອປະຕິບັດທຸລະກິດຂອງເຂົາເຈົ້າດ້ວຍຈັນຍາທຳ ແລະ ມີຄວາມຮັບຜິດຊອບ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍ ແລະ ກົດລະບຽບທີ່ນຳໃຊ້.

2. **ສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ (DEI)** – ຜູ້ສະໜອງຂອງພວກເຮົາແມ່ນຖືກຄາດຫວັງໃຫ້ສະຖານທີ່ເຮັດວຽກມີຄວາມຍຸດຕິທຳ ແລະ ມີຄວາມປອດໄພ ແລະ ສະແດງຄວາມເຄົາລົບນັບຖືສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ.

3. **ຄວາມຍືນຍົງທາງດ້ານສິ່ງແວດລ້ອມ** – ຜູ້ສະໜອງຂອງພວກເຮົາແມ່ນຖືກຄາດຫວັງໃຫ້ຍອມຮັບເອົານະໂຍບາຍ ແລະ ການປະຕິບັດຕົວຈິງ ທີ່ປົກປ້ອງໂລກ ແລະ ລຸດຜ່ອນຜົນ



# ສິ່ງທີ່ພວກເຮົາຄາດຫວັງ

**ພວກເຮົາຄາດຫວັງວ່າຜູ້ສະໜອງຂອງພວກເຮົາປະຕິບັດຕາມມາດຕະຖານຂັ້ນພື້ນຖານທີ່ລະບຸໄວ້ໃນກົດລະບຽບ - ແລະ ປະຕິບັດເພີ່ມເຕີມບ່ອນທີ່ເໝາະສົມ ຫຼື ຈຳເປັນຕ້ອງລະບຸໃນສັນຍາ. ພວກເຮົາຍັງຄາດຫວັງຜູ້ສະໜອງຂອງພວກເຮົາຈະຮັບປະກັນວ່າຄູ່ຄ້າທຸລະກິດຂອງຕົນເອງແມ່ນໄດ້ມາດຕະຖານທຽບເທົ່າທີ່ໄດ້ກຳນົດໄວ້ໃນລະບຽບ.**

- ອິມພີຣຽວແມ່ນມີວິທີການ ‘ປັບປຸງຢ່າງຕໍ່ເນື່ອງ’ ເພື່ອປະຕິບັດມາດຕະຖານເຫຼົ່ານີ້. ພວກເຮົາຄາດຫວັງຜູ້ສະໜອງຂອງພວກເຮົາສາມາດສະແດງໃຫ້ເຫັນວ່າພວກເຂົາດຳເນີນກິດຈະກຳໃນລັກສະນະທີ່ສອດຄ່ອງຕາມກົດລະບຽບ. ເມື່ອສົງໃສວ່າມີການລະເມີດ, ພວກເຮົາອາດຈະຮ້ອງຂໍການຮ່ວມມືກັບການສອບສອບທັງພາຍໃນ ແລະ ພາຍນອກ ແລະ ເພື່ອປັບປຸງຂື້ນ.
- ພວກເຮົາທຸກຄົນແມ່ນໄດ້ຜົນປະໂຫຍດຈາກການປະພຶດຕິທີ່ມີຄວາມຮັບຜິດຊອບ ເຊິ່ງມັນແມ່ນສິ່ງສຳຄັນໃນການຮັກສາສັງຄົມ ແລະ ປົກປ້ອງທັງຊື່ສຽງຂອງພວກເຮົາ ແລະ ຂອງເຂົາເຈົ້າ. ການປະຕິບັດຕາມກົບລະບຽບ ແລະ ຄວາມເຕັມໃຈຂອງຜູ້ສະໜອງໃນການແກ້ໄຂຂໍ້ບົກພ່ອງ ຈະສຳຄັນໃນການຕັດສິນໃຈຂອງພວກເຮົາທີ່ຈະເຂົ້າຮ່ວມ ຫຼື ສືບຕໍ່, ສ້າງສາຍສຳພັນທາງທຸລະກິດ.
- ຖ້າຫາກທ່ານມີຄຳຖາມກ່ຽວກັບຂໍ້ມູນກົດລະບຽບ ແລະ ສອບຖາມຄາດຫວັງຂອງທ່ານ, ແມ່ນໃຫ້ຕິດຕໍ່ຫາຕົວແທນຈັດຊື້ໃນຂົງເຂດຂອງທ່ານ.
- ຖ້າຫາກທ່ານສັງເກດ ຫຼື ສົງໄສພຶດຕິກຳທີ່ບໍ່ສອດຄ່ອງກັບກົດລະບຽບ,ພວກເຮົາຊຸກຍູ້ໃຫ້ທ່ານເວົ້າອອກມາ.
- ການບໍລິການການແຈ້ງເບະແສຂອງພວກເຮົາແມ່ນມີໄວ້ໃຫ້ກັບພະນັກງານຂອງພວກເຮົາ ແລະ ຄູ່ຮ່ວມທຸລະກິດທາງນອກ, ລວມທັງຜູ້ສະໜອງຂອງພວກເຮົາ ແລະ ພະນັກງານຂອງເຂົາເຈົ້າ.ພວກເຮົາຊຸກຍູ້ໃຫ້ທ່ານສົ່ງເສີມຫຼັກການເວົ້າອອກມາ ໃຫ້ກັບພະ ນັກງານຂອງທ່ານ ແລະ ພາກສ່ວນທີສາມທີ່ເຮັດວຽກຕາງໜ້າອິມພີຣຽວ.
- ທ່ານສາມາດອ່ານເພີ່ມເຕີມກ່ຽວກັບວິທີການທີ່ເວົ້າອອກມາ ແລະ ນະໂຍບາຍການບໍ່ຕອບໂຕ້ໃນກົດລະບຽບການການແຈ້ງເບາະແສ.





# ຫຼັກການແນະນຳຈັດຫາດ້ວຍຄວາມຮັບຜິດຊອບຂອງພວກເຮົາ

**ພວກເຮົາຮຽກຮ້ອງໃຫ້ຜູ້ສະໜອງ ແລະ ຄູ່ຄ້າຂອງພວກເຮົາມາຮ່ວມການໃຫ້ຄຳໝັ້ນສັນຍາຮ່ວມກັນ.**



1

ພວກເຮົາໃຫ້ຄຳໝັ້ນສັນຍາປະຕິບັດໃຫ້ສອດຄ່ອງກັບກົດໝາຍ ແລະ ກົດລະບຽບທີ່ນຳໃຊ້.

2

ພວກເຮົາໃຫ້ຄຳໝັ້ນສັນຍາ ເພື່ອປະຕິບັດດ້ວຍຄວາມຮັບຜິດຊອບ ແລະ ມີຄວາມຊື່ສັດໃນທຸກຂົງເຂດຂອງທຸລະກິດ.

3

ພວກເຮົາໃຫ້ຄຳໝັ້ນສັນຍາ ເພື່ອເຄົາລົບຕໍ່ສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ. ລວມທັງສິດຕໍ່ຄວາມຍຸດຕິທຳ, ສຸຂະພາບດີ ແລະ ສະຖານທີ່ເຮັດວຽກທີ່ປອດໄພ.

4

ພວກເຮົາໃຫ້ຄຳໝັ້ນສັນຍາເພື່ອຈັດຫາ ແລະ ບໍລິການຢ່າງມີສະຕິຕໍ່ຄວາມຮັບຜິດຊອບ ແລະ ສິ່ງແວດລ້ອມ, ໃນໃນຂະນະດຽວກັນ, ຂະນະທີ່ຮ່ວມມືກັບຜູ້ສະໜອງຂອງພວກເຮົາເພື່ອຮັບປະກັນການປັບປຸງຢ່າງຕໍ່ເນື່ອງໃນຄວາມພະຍາຍາມຂອງຍືນຍົງຂອງພວກເຮົາ.



# ມາດຕະຖານຂັ້ນພື້ນຖານຂອງພວກເຮົາ

**ພາກນີ້ຂອງກົດລະບຽບໄດ້ສະຫຼຸບມາດຕະຖານຂັ້ນຕ່ຳທີ່ຄາດຫວັງຕໍ່ກັບຜູ້ສະໜອງຂອງອິນພິຣຽວ. ຂໍ້ມູນເພີ່ມເຕີມແມ່ນຢູ່ໃນພາກຕໍ່ໄປ.**

## ຄວາມຊື່ສັດທາງທຸລະກິດ:

- **ຕ້ານການໃຫ້ສິນບົນ,ການສໍ້ລາດບັງຫຼວງ ແລະ ການຫຼົກລ່ຽງພາສີ :** ປະຕິບັດຢ່າງຊື່ສັດ ແລະ ສອດຄ່ອງກັບກົດໝາຍ ການຕ້ານການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງ.
- **ຂອງຂວັນ ແລະ ການຕ້ອນຮັບ:** ຢ່າສະເໜີ ຫຼື ຮັບເອົາຂອງຂວັນ, ການບັນເທີງທີ່ເປັນ ຫຼືອາດຈະຖືກເບິ່ງວ່າ ຄວາມພະຍາຍາມທີ່ມີອິດທິພົນຕໍ່ການຕັດສິນໃຈທາງທຸລະກິດ. ຫ້າມມອບຂອງຂວັນ ຫຼື ການຕ້ອນຮັບໃຫ້ແກ່ພາກລັດ ຫຼື ລັດຖະບານ ເວັ້ນເສຍແຕ່ວ່າຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການອະນຸມັດລ່ວງໜ້າ.
- **ຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ:** ຂໍໃຫ້ແຈ້ງພວກເຮົາກ່ຽວກັບຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດຕົວຈິງ ຫຼື ທີ່ເປັນໄປໄດ້.
- **ຄວາມລັບ ແລະ ຄວາມເປັນສ່ວນຕົວ :** ປົກປ້ອງຄວາມລັບ ແລະ ຄວາມເປັນສ່ວນຕົວຂອງພວກເຮົາ ແລະ ແຈ້ງໃຫ້ພວກເຮົາຊາບໃນກໍລະນີມີການລະເມີດ ຫຼື ສົງໄສວ່າມີການລະເມີດ.
- **ເຮັດການຕະຫຼາດດ້ວຍຄວາມຮັບຜິດຊອບ:** ຫ້າມໂຄສະນາ ຫຼື ເຮັດການຕະຫຼາດຜະລິດຕະພັນກັບຜູ້ທີ່ບໍ່ສູບຢາ ຫຼື ຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ (ຫຼື ອາຍຸຂັ້ນຕໍ່າຕາມກົດໝາຍທ້ອງຖິ່ນທີ່ກໍານົດ ຖ້າອາຍຸສູງກວ່າ). ປະຕິບັດຕາມມາດຕະຖານການຕະຫຼາດທີ່ນໍາໃຊ້ໄດ້.
- **ການຄ້າເຖື່ອນ:** ຫ້າມມີສ່ວນຮ່ວມ ຫຼື ສະໜັບສະໜຸນການຄ້າເຖື່ອນ.
- **ການແຂ່ງຂັນທີ່ຍຸດຕິທໍາ ແລະ ການຕ້ານຄວາມໄວ້ວາງໃຈ:** ປະຕິບັດການນໍາໃຊ້ ການຕ້ານຄວາມໄວ້ວາງໃຈ ແລະ ສອດຄ່ອງກັບກົດໝາຍການແຂ່ງຂັນ; ຫ້າມບໍ່ໃຫ້ແບ່ງປັນຂໍ້ມູນຊັບສິນ ຫຼື ຂໍ້ມູນຄວາມລັບ.
- **ການລົງໂທດ ແລະ ການຄວບຄຸມການສົ່ງອອກ:** ທໍາຄວາມເຂົ້າໃຈ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍການລົງໂທດ ແລະ ການຄວບຄຸມການສົ່ງອອກທີ່ກ່ຽວທຸລະກິດຂອງທ່ານ ແລະ ການສະໜອງເຄື່ອງ ແລະ ການບໍລິການໃຫ້ກັບອິນພີຣຽວ.

## ສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ (DEI):

- **ການໃຊ້ແຮງງານເດັກ:** ຜູ້ສະໜອງຈໍາຕ້ອງບໍ່ຈ້າງງານເດັກທີ່ມີອາຍຸຕໍ່າກວ່າ 13 ປີ ແລະ ຈໍາຕ້ອງບໍ່ຈ້າງງານຜູ້ທີ່ມີອາຍຸຕໍ່າກວ່າອາຍຸການເຮັດວຽກຂອງກົດໝາຍທ້ອງຖິ່ນ. ປົກປ້ອງເດັກຈາກການເຮັດວຽກທີ່ເປັນອັນຕະລາຍ ເຮັດວຽກປຽບດັ່ງຂ້າທາດ, ການຄ້າແຮງງານ ແລະ ການຂູດຮີດທາງເພດ.
- **ການຂູດຮີດແຮງງານແບບໃໝ່, ການບັງຄັບໃຊ້ແຮງງານ ແລະ ການຄ້າມະນຸດ:** ທຸກໆການເຮັດວຽກຕ້ອງເຮັດດ້ວຍຄວາມສະໝັກໃຈ. ຫ້າມບໍ່ໃຫ້ຈ້າງຜູ້ອອກແຮງງານເພື່ອຄ່າທໍານຽມ ຫຼື ປົດໜີ້. ອະນຸຍາດໃຫ້ຜູ້ອອກແຮງງານເກັບຮັກສາຂໍ້ມູນສ່ວນຕົວ ແລະ ເອກະສານສ່ວນຕົວ. ເຄົາລົບເສລີພາບ ແລະ ການ ເຄື່ອນໄຫວ.
- **ຊົ່ວໂມງເຮັດວຽກ, ການຈ້າງງານ ແລະ ຜົນປະໂຫຍດ:** ຮັບປະກັນວ່າຊົ່ວໂມງເຮັດວຽກ ແລະ ຄ່າຕອບແທນແມ່ນສົມເຫດສົມຜົນ ແລະ ປະຕິບັດຕາມກົດໝາຍທ້ອງຖິ່ນ. ຈ່າຍຄ່າຈ້າງງານຕົງເວລາ ແລະ ໃຫ້ການລາພັກໄດ້.
- **ການປະຕິບັດທີ່ຍຸດຕິທໍາ, ຄວາມຫຼາກຫຼາຍ, ຄວາມສະ ເໝີພາບ ແລະ ການມີສ່ວນຮ່ວມ:** ປະຕິບັດຕໍ່ກັບພະນັກງານທຸກຄົນດ້ວຍກຽດ, ສັກສີ, ຄວາມເຄົາລົບ ແລະ ຄວາມຍຸດຕິ. ສົ່ງເສີມຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມໃນການຈ້າງງານ, ການສົ່ງເສີມ ແລະ ການເປັນຕົວແທນຂອງການຄຸ້ມຄອງ.
- **ເສລີພາບໃນສະມາຄົມ:** ເຄົາລົບສິດຂອງພະນັກງານໃນການເຂົ້າຮ່ວມ ຫຼື ສ້າງຕັ້ງກໍາມະບານ ແລະ ຕໍ່ລອງລວມກັນ.
- **ກົນໄກ ແລະ ວິທີການແກ້ໄຂການຮ້ອງທຸກ:** ຖ້າເປັນໄດ້ ຄວນໃຫ້ພະນັກງານມີຊ່ອງທາງ ການລາຍງານທີ່ເປັນຄວາມລັບ ໃນການລາຍງານຮ້ອງຟ້ອງ ແລະ ການຮ້ອງທຸກ ໂດຍບໍ່ຕ້ອງຢ້ານການແກ້ແຄ້ນ ຫຼື ການຕອບໂຕ້.
- **ສຸຂະພາບ ແລະ ຄວາມປອດໄພ:** ປະຕິບັດຕາມກົດໝາຍສຸຂະພາບ ແລະ ຄວາມປອດໄພ ແລະ ກົດລະບຽບໃນສະຖານທີ່ເຮັດວຽກ. ຮັບປະກັນສິ່ງອໍານວຍຄວາມສະດວກແມ່ນສະອາດ ແລະ ປອດໄພ, ແລະ ສະໜອງການຝຶກອົບຮົມ ແລະ ເຄື່ອງມືໃຫ້ພະນັກງານຢ່າງເໝາະສົມ.

## ຄໍາໝັ້ນສັນຍາທາງດ້ານສິ່ງແວດລ້ອມ:

- **ກົດໝາຍກ່ຽວກັບສິ່ງແວດລ້ອມ:** ປະຕິບັດຕາມກົດໝາຍສິ່ງແວດລ້ອມ ແລະ ກົດລະບຽບທີ່ກ່ຽວຂ້ອງ ກັບທຸລະກິດຂອງທ່ານ. ລາຍງານທຸກເຫດການ ຫຼື ສິ່ງທີ່ບໍ່ປອດໄພໃຫ້ກັບອໍານາດການປົກຄອງ ແລະ/ຫຼື ລາຍງານຜ່ານຊ່ອງທາງເວົ້າອອກມາຂອງອິນພີຣຽວ.
- **ການປັບປຸງຢ່າງຕໍ່ເນື່ອງ:** ທໍາຄວາມຄຸ້ນເຄີຍກັບແຜນຍຸດທະສາດກ່ຽວກັບ ESG ຂອງອິນພີຣຽວ ແລະ ຊອກວິທີທີ່ຈະກ້າວໄປສູ່ເປົ້າໝາຍ ແລະ ການປົກປ້ອງໂລກ..

# ຄວາມຊື່ສັດທາງທຸລະກິດ

**ການປະຕິບັດດ້ວຍຄວາມຮັບຜິດຊອບ ແລະ ຄວາມຊື່ສັດໄດ້ເຮັດໃຫ້ອິມພີຣຽວສາມາດສ້າງ ແລະ ເຮັດທຸລະກິດແບບຍືນຍົງ. ພວກເຮົາໃຫ້ຄຸນຄ່າການຮ່ວມມື ແລະຄວາມໜ້າເຊື່ອຖື ທີ່ພວກເຮົາມີໃຫ້ຜູ້ສະໜອງທີ່ຊ່ວຍເຮັດໃຫ້ພວກເຮົາ ຖືເອົາທັງຕົວເຮົາ ແລະ ຄູ່ຮ່ວມທຸລະກິດຂອງເຮົາມີຄວາມຮັບຜິດຊອບໃນການດໍາເນີນທຸລະກິດຂອງພວກເຮົາຢ່າງເປັນມືອາຊີບ ແລະ ມີຈັນຍາບັນ.**



**ໃນນາມເປັນຜູ້ສະໜອງຂອງອິມພີຣຽວ, ພວກເຮົາຄາດຫວັງທ່ານຈະປະຕິບັດຕາມມາດຕະຖານດັ່ງຕໍ່ໄປນີ້, ແຕ່ໃນທຸກກໍລະນີທ່ານຕ້ອງປະຕິບັດກົດໝາຍທ້ອງຖິ່ນເປັນມາດຕະຖານຕໍ່າສຸດ:**

### ການຕ້ານການໃຫ້ສິນບົນ, ການຕ້ານການສໍ້ລາດບັງຫຼວງ ແລະ ການຫຼີກລ່ຽງພາສີ

- ແບ່ງປັນວິທີການທີ່ບໍ່ອົດທົນຕໍ່ກັບການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງໃນທຸກໆການພົວພັນທາງທຸລະກິດ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍການຕ້ານການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງ. ພວກເຮົາຈະໃຊ້ສິດຂອງພວກເຮົາເພື່ອຮຽກຮ້ອງໃຫ້ມີການປະຕິບັດທີ່ຖືກຕ້ອງ ແລະ ລົງໂທດຜູ້ສະໜອງຜູ້ທີ່ມີສ່ວນຮ່ວມໃນການສໍ້ລາດບັງຫຼວງ, ລວມທັງການຍົກເລີກສັນຍາ.
- ຫ້າມສະເໜີ, ຈ່າຍ ຫຼື ຮັບສິນບົນ.
- ຫ້າມສະເໜີ ຫຼື ໃຫ້ສິ່ງຂອງມີຄ່າ (ບໍ່ວ່າຈະສິ່ງນ້ອຍກໍ່ຕາມ) ໃຫ້ກັບບຸກຄົນທີ່ມີເຈດຕະນາ ບໍ່ສ້າງຄວາມໝັ້ນຄົງ, ຮັກສາ ຫຼື ອໍານວຍຄວາມສະດວກໃຫ້ແກ່ທຸລະກິດ (ເຊັ່ນການຈ່າຍເງິນເພື່ອລຸດພາສີ ຫຼື ພາສີອາກອນ).
- ລາຍງານຄວາມກັງວົນໃນການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງຕໍ່ກຸ່ມກົດໝາຍ ຫຼື ທີມກົດໝາຍທ້ອງຖິ່ນທີ່ ຜ່ານ SpeakUp@impbrands.com ຫຼືງານງານອອນລາຍຜ່ານ Speaking Up .

### ຂອງຂວັນ ແລະ ການຕ້ອນຮັບ

- ຄໍາແນະນໍາການໃຫ້ຂອງຂວັນ ແລະ ສິ່ງບັນເທີງຂອງອິມພີຣຽວ ອະນຸຍາດໃຫ້ຮັບ ແລະ ໃຫ້ສິ່ງຂອງທີ່ສົມເຫດສົມຜົນ, ສິ່ງບັນເທີງ ແລະ ການຕ້ອນຮັບທີ່ໃຫ້ ຫຼື ໄດ້ຮັບຈາກພາກສ່ວນທີສາມ ເພື່ອສ້າງສາຍສໍາພັນທີ່ດີໃນທາງທຸລະກິດ.
- ຫ້າມບໍ່ໃຫ້ຂອງຂວັນ, ສິ່ງບັນເທີງ, ຫຼື ການຕ້ອນຮັບແກ່ພະນັກງານ ຫຼື ຍອມຮັບເອົາຂອງຂວັນ, ສິ່ງບັນເທີງ ຫຼື ການຕ້ອນຮັບ, ທີ່ມີເຈດຕະນາ ຫຼື ອາດຈະເບິ່ງຄ້າຍຄືວ່າພະຍາຍາມມີອິດທິພົນທາງທຸລະກິດ.
- ຫ້າມບໍ່ໃຫ້ຂອງຂວັນ, ສິ່ງບັນເທີງ, ຫຼື ການຕ້ອນຮັບແກ່ພະນັກງານລັດ ຫຼື ລັດຖະບານ, ຍົກເວັ້ນບ່ອນທີ່ຖືກົດໝາຍ ແລະ ໄດ້ຮັບອະນຸຍາດ..



> “ແບ່ງປັນວິທີການທີ່ບໍ່ອົດທົນຕໍ່ກັບການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງ ໃນທຸກໆການພົວພັນທາງທຸລະກິດ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍການຕ້ານການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງ”

# ຄວາມຊື່ສັດທາງທຸລະກິດ

### ຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ

- ປະຕິບັດດ້ວຍຄວາມຊື່ສັດແລະຄວາມໂປ່ງໃສ, ແຈ້ງກ່ຽວກັບສາຍພົວພັນໃນການລົງທຶນ, ການເຮັດວຽກ ຫຼື ກ່ຽວກັບບັນຫາອື່ນໆທີ່ອາດຈະສະສົມກາຍເປັນຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ.
- ແຈ້ງພວກເຮົາຖ້າຫາກທ່ານຮັບຮູ້ກ່ຽວກັບຄວາມເປັນໄປໄດ້ ຫຼື ຂໍ້ຂັດແຍ່ງຕົວຈິງໃນການເຮັດວຽກຂອງທ່ານ (ຕົວຢ່າງ, ຖ້າຫາກວ່າພະນັກງານອິມພີຣຽວແມ່ນມີການພົວພັນກັບບໍລິສັດຂອງທ່ານ ຫຼື ຖ້າຫາກພະນັກງານໃດໜຶ່ງແມ່ນມີສ່ວນກ່ຽວພັນກັບຜູ້ໃດຜູ້ໜຶ່ງໃນອິມພີຣຽວ).
- ລາຍງານເຫດການຂໍ້ຂັດແຍ່ງຕົວຈິງ ຫຼື ຄວາມເປັນໄປໄດ້ ໄວເທົ່າທີ່ຈະໄວໄດ້ຖ້າຫາກເຂົາຮັບຮູ້.

### ການຮັກສາຄວາມລັບ ແລະ ຄວາມເປັນສ່ວນຕົວ

- ປົກປ້ອງຂໍ້ມູນສ່ວນຕົວ ແລະ ຈັດຕັ້ງປະຕິບັດມາດຕະຖານການປ້ອງກັນຢ່າງເໝາະສົມ ເພື່ອຮັບປະກັນຄວາມເປັນສ່ວນຕົວຂອງພະນັກງານ, ລູກຄ້າ ແລະ ຜູ້ສະໜອງຕາມ ກົດລະບຽບການປົກປ້ອງຂໍ້ມູນທົ່ວໄປຂອງປະເທດ EU ແລະ ກົດລະບຽບ ແລະ ກົດໝາຍການປ້ອງກັນຂໍ້ມູນທີ່ໄດ້ນຳໃຊ້.
- ປົກປ້ອງຂໍ້ມູນຄວາມລັບຂອງອິມພີຣຽວ, ແບ່ງປັນໃຫ້ສະເພາະໃຫ້ຜູ້ທີ່ຄວນຮູ້ ແລະ ຜູ້ທີ່ອະນຸຍາດເທົ່ານັ້ນ.
- ແຈ້ງພວກເຮົາທັນທີກ່ຽວກັບການສົງໃສ ຫຼື ຂໍ້ມູນການລະເມີດຕົວເລກ ຫຼື ຖ້າຫາກຂໍ້ມູນຂອງພວກເຮົາຮົ່ວໄຫຼໄປຫາພາກສ່ວນທີ່ສາມ ໂດຍບໍ່ໄດ້ຮັບອະນຸຍາດຈາກພວກເຮົາ.
- ຮັກສາ ແລະ ບໍ່ເປີດເຜີຍຂໍ້ມູນຢ່າງມີກຽດ ຫຼື ຂໍ້ຕົກລົງທີ່ເປັນຄວາມລັບກັບເຮົາ ເພື່ອປົກປ້ອງຂໍ້ມູນທີ່ເປັນຄວາມລັບ.
- ສຳເລັດຂໍ້ຕົກລົງ ການປະມວນຜົນຂໍ້ມູນ ຖ້າຫາກມີການດຳເນີນການດ້ານສ່ວນຕົວຂອງພະນັກງານຂອງພວກເຮົາ, ຂອງລູກຄ້າ ຫຼື ຜູ້ສະໜອງ.

### ເຮັດການຕະຫຼາດດ້ວຍຄວາມຮັບຜິດຊອບ

- ເຮັດໂຄສະນາ ຫຼື ເຮັດການຕະຫຼາດຢາສູບ ແລະ ຜະລິດຕະພັນສຳລັບຄົນຮຸ່ນໃໝ່ (NGP) ກັບຜູ້ສູບຜູ້ໃຫຍ່ ຫຼື ຜູ້ສູບເພື່ອການພັກຜ່ອນຂອງຜະລິດຕະພັນທີ່ມີສານນິໂກຕິນ. ຜູ້ໃຫຍ່ແມ່ນຜູ້ສູບທີ່ມີອາຍຸ 18 ປີຂຶ້ນໄປ ຫຼື ຜູ້ທີ່ມີອາຍຸສູງກວ່າ ເກນກຳນົດສຳລັບຊົມໃຊ້ຜະລິດຕະພັນຕາມທ້ອງຖິ່ນ.
- ນຳໃຊ້ມາດຕະຖານການຕະຫຼາດຂອງອິມພີຣຽວ ໃນການໂຄສະນາໃຫ້ກັບຜູ້ສູບ/ອຸປະກອນການສົ່ງເສີມ ແລະ ກິດຈະກຳທີ່ທ່ານສ້າງຂຶ້ນມາສຳລັບ ຍີ່ຫໍ້ຜະລິດຕະພັນ. ມາດຕະຖານການຕະຫຼາດຂອງພວກເຮົາເປັນອັນດັບໜຶ່ງ ຍົກເວັ້ນບ່ອນທີ່ມີກົດໝາຍທ້ອງຖິ່ນທີ່ມີມາດຕະຖານສູງກວ່າ.

### ການຄ້າເຖື່ອນ

- ຫ້າມບໍ່ໃຫ້ມີສ່ວນຮ່ວມ ຫຼື ສະໜັບສະໜູນການຄ້າເຖື່ອນໃນທຸກຮູບແບບ ແລະ ຮ່ວມມືກັບອຳນາດການປົກຄອງເພື່ອສະກັດກັ້ນຜະລິດຕະພັນທີ່ຜິດກົດໝາຍ ເຂົ້າສູ່ຕະຫຼາດທີ່ຖືກຕ້ອງຕາມກົດໝາຍ.
- ປະຕິບັດຕາມນະໂຍບາຍການສະໜອງຜະລິດຕະພັນຂອງອິມພີຣຽວ.
- ລາຍງານຫາພວກເຮົາໃນກໍລະນີສົງໄສກ່ຽວກັບການຄ້າເຖື່ອນກ່ຽວກັບຜະລິດຕະພັນຂອງພວກເຮົາ, ລວມທັງການນຳໃຊ້ຍີ່ຫໍ້ຜະລິດຕະພັນຂອງພວກເຮົາ.



> ແຈງພົວກົເຮົາທັ ນ ທເມອ ສໍາງໄສໍາ ຫ້ ພິ ບ ຂ້ມນລັະເມດ ຕົວິຈງ, ຫ້ ຂ ມນຂອງພົວກົເຮົາຖກົເປດເຜູ້ຍ ໃຫ້ ພົາກົສໍາວນທສໍາາມໂດຍ ບໄ ດ ຮົບອະ ນຍາດ



# ຄວາມຊື່ສັດທາງທຸລະກິດ

### ການແຂ່ງຂັນທີ່ຍຸດຕິທຳ ແລະ ຕ້ານການຜູກຂາດ

- ຮັບຮູ້ ແລະ ປະຕິບັດຕາມກົດໝາຍຕ້ານການຜູກຂາດ ແລະ ກົດໝາຍການແຂ່ງຂັນໃນຕະຫຼາດທີ່ທ່ານດຳເນີນທຸລະກິດຢູ່.
- ຮ່ວມມືກັບຄູ່ແຂ່ງຂອງພວກເຮົາ ໃນກໍລະນີທີ່ຈຳເປັນ ທີ່ຈະບໍ່ສ້າງຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ ແລະ ບ່ອນທີ່ມີຂັ້ນຕອນປົກປ້ອງຂໍ້ມູນລັບຂອງອິມພີຣຽວ ແລະ ເຄົາລົບຕໍ່ກົດໝາຍການແຂ່ງຂັນ.
- ຫ້າມບໍ່ໃຫ້ປຶກສາຫາລືກັບຄູ່ແຂ່ງກ່ຽວກັບທາງດ້ານການຄ້າທີ່ລະອຽດອ່ອນ ເຊັ່ນ: ຄ່າໃຊ້ຈ່າຍທີ່ນຳໃຊ້ເຂົ້າໃນບໍລິສັດ, ລາຄາສິນຄ້າ, ເງື່ອນໄຂທາງການຄ້າ ຫຼື ການເປີດໂຕຜະລິດຕະພັນໃໝ່.
- ຫ້າມເປັນໂຕກາງລະຫວ່າງບໍລິສັດ ແລະ ຄູ່ແຂ່ງຂອງພວກເຮົາ, ລວມເຖິງການບໍ່ເປີດເຜີຍເຄັດລັບການຄ້າຂອງຄູ່ແຂ່ງໃຫ້ແກ່ພວກເຮົາ ຫຼື ຂໍ້ມູນຄວາມລັບອື່ນໆ.

### ການລົງໂທດ ແລະ ການຄວບຄຸມການສົ່ງອອກ

- ເຂົ້າໃຈຂໍ້ຈຳກັດຂອງການຄ້າ ແລະ ການຄວບຄຸມການສົ່ງອອກ ທີ່ກ່ຽວຂ້ອງກັບທຸລະກິດຂອງທ່ານ.
- ປະຕິບັດຕາມກົດໝາຍການລົງໂທດທີ່ນຳໃຊ້ທັງໝົດ ແລະ ການຄວບຄຸມການສົ່ງອອກໃນທຸກວຽກງານທີ່ປະຕິບັດໃຫ້ກັບອິມພີຣຽວແບຣນ..

## ການແຈ້ງເບາະແສ

ແຈ້ງຂໍ້ກັງວົນຂອງທ່ານແບບບໍ່ເປີດເຜີຍຕົວຕົນ ໂດຍນຳໃຊ້ ແຈ້ງເບາະແສທາງອອນລາຍ.
ນະໂຍບາຍແຈ້ງເບາະແສທາງອອນລາຍຂອງພວກເຮົາ ສະໜອງວິທີການສຳລັບການລາຍງານຄວາມກັງວົນ ແລະ ຂໍ້ມູນ ທີ່ບໍ່ມີການຕອບໂຕ້.

ການແຈງເບາະແສ



> ເຂົ້າໃຈ ແລະ ປະຕິບັດຕາມກົດ ໝາຍ ຕ້ານການຜູກຂາດ ແລະ ກົດໝາຍ ການແຂ່ງຂັນ ຢູ່ໃນຕະຫຼາດທີ່ ທ່ານດຳເນີນທຸລະກິດຢູ່

# ສິດທິມະນຸດ



**ພວກເຮົາເຫັນສຳຄັນຄວາມປອດໄພ, ກຽດສັກສີ, ຄວາມເປັນຢູ່ທີ່ດີຂອງພະນັກງານ ຂອງຄູ່ຮ່ວມທຸລະກິດ ແລະ ຊຸມຊົນທີ່ພວກເຮົາດຳເນີນທຸລະກິດ.**

ພວກເຮົາເຄົາລົບສິດທິມະນຸດ ຕະຫຼອດການດຳເນີນງານຂອງພວດເຮົາ ແລະ ໃຫ້ຄຳໝັ້ນສັນຍາວ່າຈະລົກລ້ຽງການໃຊ້ແຮງງານເດັກ, ການບັງຄັບ ຫຼື ການຜູກມັດແຮງງານ ຕະຫຼອດຮອດການປົກປ້ອງສິດເສລີພາບຂອງອົງການຈັດຕັ້ງ. ພວກເຮົາໄດ້ຮັບການຊີ້ນຳໂດຍ ຖະແຫຼງການຂອງສິດທິມະນຸດ, ຫຼັກການແນະນຳກ່ຽວກັບທຸລະກິດແລະ ສິດທິມະນຸດຂອງສະຫະປະຊາຊາດ, ກົດລະບຽບອົງການແຮງງານສາກົນ (ILO) ກ່ຽວກັບຫຼັກການພື້ນຖານ ແລະ ສິດໃນການປະຕິບັດວຽກ. ສຳລັບຂໍ້ມູນເພີ່ມເຕີມ, ສາມາດເຂົ້າເບິ່ງໄດ້ທີ່ ນະໂຍບາຍສິດທິມະນຸດຂອງອິມພີຣຽວແບຣນ. ພວກເຮົາຫວັງວ່າຜູ້ສະໜອງຈະຮັກສາຄຳໝັ້ນສັນຍາຂອງພວກເຮົານຳກັນຕໍ່ສິດທິມະນຸດ ແລະ ຮ່ວມມືກັນ ເພື່ອຮັບປະກັນສະຖານທີ່ເຮັດວຽກ ແລະ ຊຸມຊົນທີ່ມີຄວາມຍຸດຕິທຳ ແລະ ປອດໄພ.



**ໃນນາມຜູ້ສະໜອງຂອງອິມພີຣຽວ, ພວກເຮົາຫວັງໃຫ້ທ່ານຈະປະຕິບັດຕາມມາດຖານຕໍ່ໄປນີ້ ໃນທຸກໆກໍລະນີ ທ່ານຕ້ອງປະຕິບັດຕາມກົດໝາຍທ້ອງຖິ່ນເປັນມາດຖານຂັ້ນຕໍ່າ:**

### ການໃຊ້ແຮງງານເດັກ

- ບໍ່ໃຫ້ຈ້າງເດັກນ້ອຍອາຍຸຕໍ່າກວ່າ 13 ປີ ແລະ ບໍ່ຈ້າງບຸກຄົນທີ່ມີອາຍຸຕໍ່າກວ່າອາຍຸຂັ້ນຕໍ່າຕາມກົດໝາຍທ້ອງຖິ່ນກຳນົດໄວ້.
- ວຽກເບົາອາດໄດ້ຮັບອານຸຍາດໃຫ້ເຮັດໃນຊົ່ວໂມງທີ່ກົດໝາຍທ້ອງຖິ່ນກຳນົດໂດຍທີ່ບໍ່ກະທົບຕໍ່ການສຶກສາ, ສຸຂະພາບ ແລະ ການພັດທະນາຕົນເອງ.
- ບໍ່ຈ້າງບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ ເຂົ້າເຮັດວຽກທີ່ເປັນອັນຕະລາຍ (ຕາມກົດໝາຍທ້ອງຖິ່ນກຳນົດໄວ້)
- ປົກປ້ອງເດັກຈາກການເປັນຂ້າທາດ, ການຄ້າມະນຸດ ແລະ ການຄ້າປະເວນີ.

### ການຂູດຮີດແຮງງານສະໄໝໃໝ່, ການບັງຄັບແຮງງານ ແລະ ການຄ້າມະນຸດ

- ຈ້າງພະນັກງານໂດຍສະໝັກໃຈ ຕາມສະພາບ ແລະ ເງື່ອນໄຂ ຂອງການສະໝັກງານ. ຄວນເຮັດສັນຍາຈ້າງງານທີ່ເປັນລາຍລັກອັກສອນເມື່ອມີການຮ້ອງຂໍ ຫຼື ຕາມຄວາມຈຳເປັນຂອງກົດໝາຍທ້ອງຖິ່ນ.
- ບໍ່ຈ້າງພະນັກງານທີ່ມີຄ່າທຳນຽມການສະໝັກງານ, ຄ່າທຳ ນຽມຈ້າງງານ ຫຼື ການເຮັດວຽກໃຊ້ໜີ້ແບບໃດກໍ່ຕາມ.
- ອະນຸຍາດໃຫ້ພະນັກງານທຸກຄົນຮັກສາຄວາມເປັນເຈົ້າຂອງເອກະສານສ່ວນຕົວ ເຊັ່ນ: ບັດປະຈຳຕົວ ແລະ ໜັງສືເດີນທາງ.
- ເຄົາລົບສິດເສລີໃນການເຄື່ອນໄຫວ.

> **ພວກເຮົາເຫັນສຳຄັນຄວາມປອດໄພ, ກຽດສັກສີ, ຄວາມເປັນຢູ່ທີ່ດີຂອງພະນັກງານ ຂອງຄູ່ຮ່ວມທຸລະກິດ ແລະ ຊຸມຊົນທີ່ພວກເຮົາດຳເນີນທຸລະກິດ**

แຂງແຮງກວ່າ, ດີກວ່າ, ມີສ່ວນຮ່ວມດ້ວຍກັນກັບຜູ້ສະໜອງຂອງພວກເຮົາ

## *ສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ*

### ຊົ່ວໂມງເຮັດວຽກ, ຄ່າແຮງງານ ແລະ ຜົນປະໂຫຍດ

- ຮັບປະກັນວ່າຊົ່ວໂມງເຮັດວຽກ ແລະ ຄ່າງແຮງງານຖືກກົດໝາຍ ແລະ ສົມເຫດສົມຜົນ ຊຶ່ງສອດຄ່ອງກັບກົດໝາຍໃນປະເທດ ແລະ ກົດໝາຍທ້ອງຖິ່ນ, ມາດຕະຖານອຸດສາຫະກຳ, ຫຼື ຂໍ້ຕົກລົງຕ່າງໆຮ່ວມກັບກັບພະນັກງານ ແລ້ວແຕ່ກໍລະນີໃດຈະໃຫ້ການຄຸ້ມຄອງຫຼາຍກວ່າ.
- ຈ່າຍຄ່າແຮງງານເຕັມຈຳນວນ ແລະ ຕົງເວລາ ພ້ອມທັງຮັບປະກັນ ການຫັກຄ່າແຮງງານຕ່າງໆແມ່ນຖືກຕ້ອງຕາມກົດໝາຍ, ໂປ່ງໃສ ແລະ ມີການບັນທຶກ.
- ຈັດໃຫ້ມີການລາພັກໃຫ້ແກ່ພະນັກງານທຸກຮູບແບບທີ່ລະບຸໄວ້ໃນກົດໝາຍທ້ອງຖິ່ນ ແລະ ລະບຽບການຕ່າງໆ ເຊັ່ນ: ການພັກທົ່ວໄປ, ລາພັກເຈັບປ່ວຍ, ລາພັກຜ່ອນ ແລະ ວັນພັກທາງການ.
- ຮັບປະກັນວ່າເຮັດວຽກນອກເວລາ ແລະ ວຽກເສີມແມ່ນການສະໝັກໃຈເຮັດ, ຖືກກົດໝາຍ ແລະ ໄດ້ຮັບການຊົດເຊີຍ.

### ການປະຕິບັດດ້ວຍຄວາມເປັນທຳ, ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການແບ່ງແຍກ

- ສ້າງສະຖານທີ່ເຮັດວຽກທີ່ປາດສະຈາກຄວາມຮຸນແຮງ, ການຂົ່ມຂູ່, ການລ່ວງລະເມີດທາງເພດ, ການເລືອກປະຕິບັດ ຫຼື ພຶດຕິກຳທີ່ບໍ່ດີຕ່າງໆ.
- ປະຕິບັດຕໍ່ພະນັກງານທຸກຄົນດ້ວຍຄວາມເຄົາລົບ, ໃຫ້ກຽດ ແລະ ຍຸດຕິທຳ.
- ສົ່ງເສີມຄວາມຫຼາກຫຼາຍ, ຄວາມເທົ່າທຽມ, ແລະ ບໍ່ແບ່ງແຍກໃນການຈ້າງງານ, ການເລື່ອນຕຳແໜ່ງ ແລະ ການເປັນຕົວແທນຂອງຝ່າຍບໍລິຫານ.
- ການເຮັດວຽກທາງດ້ານການຈັດຊື້ຈັດຈ້າງຕ້ອງສະໜັບສະໜູນກຸ່ມຜູ້ສະໜອງທີ່ຫຼາກຫຼາຍ.

### ສືບຕໍ່ປັບປຸງ: ຄວາມຫຼາກຫຼາຍ,ຄວາມສະເໝີພາບ & ການບໍ່ແບ່ງແຍກ

- ການປະຕິບັດງານເພື່ອເຮັດໃຫ້ສະຖານທີ່ເຮັດວຽກມີຄວາມຫຼາກຫຼາຍ ແລະ ເປີດຮັບທຸກຄົນແມ່ນຄວາມຮັບຜິດຊອບຮ່ວມກັນຂອງພວກເຮົາ. ພວກເຮົາກຳລັງສຸມໃສ່ເພື່ອບັນລຸຈຸດປະສົງການເປັນອົງກອນທີ່ຫຼາກຫຼາຍ ແລະ ເປີດຮັບແນວຄິດຂອງທຸກໆຄົນຢູ່ທີ່ອິມພີຣຽວແບຣນ ໃນຄວາມພະຍາຍາມເຫຼົ່ານີ້ ພວກເຮົາຢາກເຫັນຜູ້ສະໜອງເຮັດໜ້າທີ່ສ່ວນນີ້ຂອງຕົນ.
- ພວກເຮົາສະໜັບສະໜູນຜູ້ສະໜອງຂອງອິມພີຣຽວແບຣນສ້າງແຜນງານພາຍໃນ ເພື່ອວັດແທກ, ຕິດຕາມຢ່າງເຄັ່ງຄັດ ແລະ ສົ່ງເສີມຄວາມຫຼາກຫຼາຍ, ຄວາມສະເໝີພາບ, ແລະ ບໍ່ແບ່ງແຍກ ໃນອົງກອນຂອງພວກເຂົາ.
- ຮຽນຮູ້ເພີ່ມເຕີມກ່ຽວກັບສິ່ງທີ່ພວກເຮົາປະຕິບັດເພື່ອສົ່ງເສີມຄວາມຫຼາກຫຼາຍ, ຄວາມສະເໝີພາບ, ແລະ ບໍ່ແບ່ງແຍກ ໃນເວັບໄຊຂອງພວກເຮົາ here.

### ເສລີພາບໃນການເຂົ້າຮ່ວມສະມາຄົມ

- ເຄົາລົບສິດທິຂອງພະນັກງານ ໃນການເຂົ້າຮ່ວມ ຫຼື ສ້າງຕັ້ງອົງການກຳມະບານ ຫຼື ສະພາການເຮັດວຽກ ຕາມທີ່ພວກເຂົາເລືອກ ແລະ ຕໍ່ລອງຮ່ວມກັນໂດຍ  ບໍ່ຕ້ອງຢ້ານການຂົ່ມຂູ່ ຫຼື ການຕອບໂຕ້.



> “ພວກເຮົາກຳລັງສຸມໃສ່ເພື່ອບັນລຸການເປັນອົງກອນທີ່ຫຼາກຫຼາຍ ແລະ ເປີດຮັບແນວຄິດຂອງທຸກໆຄົນຢູ່ທີ່ອິມພີຣຽວແບຣນ ໃນຄວາມພະຍາຍາມເຫຼົ່ານີ້ ພວກເຮົາຢາກເຫັນຜູ້ສະໜອງເຮັດໜ້າທີ່ສ່ວນນີ້ຂອງຕົນ.”



# ສິດທິມະນຸດ ແລະ ຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ

### ກົນໄກການຮ້ອງທຸກ ແລະ ການແກ້ໄຂ

- ຫາກເປັນໄປໄດ້ ຈັດໃຫ້ມີກົນໄກພາຍໃນທີ່ເປັນຄວາມລັບ ແກ່ພະນັກງານໃນການຮ້ອງທຸກ ແລະ ສົ່ງຄຳຮ້ອງທຸກ ໂດຍບໍ່ຕ້ອງຢ້ານການຕອບໂຕ້. ຈຸດປະສົງເພື່ອສ້າງລະບົບທີ່ມີປະສິດຕິພາບ ແລະ ຂະບວນການພາຍໃນ ເພື່ອກວດສອບ ແລະ ແກ້ໄຂ ຂໍ້ກັງວົນຕ່າງໆ ຢ່າງໂປ່ງໃສ, ຍຸດຕິທຳ ແລະ ວ່ອງໄວ.
- ຖ້າຫາກເປັນໄປບໍ່ໄດ້, ສະໜັບສະໜູນ ໃຫ້ພະນັກງານ ລາຍງານຂໍ້ກັງວົນຫາອິມພີຣຽວ ໂດຍກົງຫາ SpeakUp@impbrands.com ຫຼື ນຳໃຊ້ຊ່ອງທາງທີ່ເປັນຄວາມລັບ Speaking Up.

### ສຸຂະພາບ ແລະ ຄວາມປອດໄພ

- ປະຕິບັດຕາມກົດໝາຍ, ລະບຽບການຕ່າງໆ ແລະ ມາດຕະຖານດ້ານສຸຂະພາບ ແລະ ຄວາມປອດໄພ.
- ສະໜອງການຝຶກອົບຮົມ, ອຸປະກອນ ແລະ ເຄື່ອງແບບເຮັດວຽກທີ່ຈຳເປັນທັງໝົດດ້ານສຸຂະພາບ ແລະ ຄວາມປອດໄພໃຫ້ແກ່ພະນັກງານ.
- ວຽກທີ່ເປັນອັນຕະລາຍ ບໍ່ຄວນປະຕິບັດງານໂດຍພະນັກງານທີ່ບໍ່ໄດ້ຜ່ານການຝຶກອົບຮົມ, ມີອາຍຸຕ່ຳກວ່າ 18ປີ, ກຳລັງຖືພາ, ແມ່ໃຫ້ນົມລູກ ຫຼື ຜູ້ອາວຸດໂສ.
- ລົດການສຳຜັດວັດຖຸ ແລະ ສານອັນຕະລາຍແກ່ພະນັກງານ, ບຸກຄົນພາຍນອກ ແລະ ຊຸມຊົນ ໃຫ້ເຫຼືອໜ້ອຍທີ່ສຸດ.
- ຮັບປະກັນໃຫ້ທີ່ພັກອາໄສ, ການເດີນທາງ ຫຼື ສິ່ງອຳນວຍຄວາມສະດວກຕ່າງໆທີ່ສະໜອງໃຫ້ພະນັກງານແມ່ນສະອາດ, ປອດໄພ ແລະ ເໝາະສົມ.
- ລາຍງານຂໍ້ກັງວົນຕ່າງໆດ້ານສຸຂະພາບ ແລະ ຄວາມປອດໄພ ທັນທີຫາຝ່າຍຈັດຊື້ຈັດຈ້າງຂອງອິມພີຣຽວ ຫຼື ຊ່ອງທາງອອນລາຍຂອງພວກເຮົາ Speaking Up.

### ສືບຕໍ່ປັບປຸງ:
### ສະຖານທີ່ເຮັດວຽກທີ່ປອດໄພ

- ພວກເຮົາຄາດຫວັງໃຫ້ ຜູ້ສະໜອງຂອງອິມພີຣຽວແບຣນ ຮ່ວມມືກັບພວກເຮົາໃນການສ້າງຊຸມຊົນ ແລະ ສະຖານທີ່ເຮັດວຽກທີ່ປອດໄພ. ນອກເໜືອຈາກນັ້ນ, ພວກເຮົາຮຽກຮ້ອງມາຍັງທ່ານໃຫ້ໄດ້ຮັບການຮັບຮອງດ້ານສຸຂະພາບ ແລະ ຄວາມປອດໄພທີ່ກ່ຽວຂອງທັງໝົດທີ່ນຳໃຊ້ໃນທຸລະກິດຂອງທ່ານ, ປະຕິບັດວຽກໃນການກຳນົດຄວາມສຽງ ແລະ ອັນຕະລາຍດ້ານສຸຂະພາບ ແລະ ຄວາມປອດໄພ ຜ່ານການຕິດຕາມ ແລະ ກວດສອບສິ່ງອຳນວຍຄວາມສະດວກ, ອຸປະກອນ ແລະ ຂັ້ນຕອນຕ່າງໆຢ່າງປົກກະຕິ,
- ປຶກສາກັບພວກເຮົາ ຫາກທ່ານຮູ້ສຶກວ່າການເຮັດວຽກດ້ານໃດດ້ານໜຶ່ງຂອງພວກເຮົາຈະປອດໄພຍິ່ງຂຶ້ນ.
- ຮຽນຮູ້ເພີ່ມເຕີມນະໂຍບາຍ Health, Safety and Wellbeing policy ໃນເວັບໄຊ ກ່ຽວກັບການໃຫ້ສັນຍາເພື່ອບັນລຸມາດຖານລະດັບໂລກດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີ.



**“ວຽກທີ່ເປັນອັນຕະລາຍບໍ່ຄວນປະຕິບັດໂດຍ ພະນັກງານທີ່ບໍ່ໄດ້ຜ່ານການຝຶກອົບຮົມ, ຜູ້ທີ່ມີອາຍຸຕ່ຳກວ່າ 18ປີ, ຜູ້ທີ່ກຳລັງຖືພາ, ຜູ້ທີ່ແມ່ກຳລັງໃຫ້ນົມລູກ, ຫຼື ຜູ້ອາວຸດໂສ”**





# ຄວາມຍືນຍົງທາງດ້ານສິ່ງແວດລ້ອມ

ພວກເຮົາໃຫ້ຄຳສັນຍາໃນການຊອກຫາວິທີການປະຕິບັນວຽກແບບຍືນຍົງເປັນມິດຕໍ່ສິ່ງແວດລ້ອມ–ມັນເປັນສິ່ງທີ່ຖືກຕ້ອງທີ່ຕ້ອງປະຕິບັດເພື່ອພະນັກງານ, ທຸລະກິດ ແລະ ໂລກຂອງພວກເຮົາ.

**ການດຳເນີນງານຂອງພວກເຮົາ, ພວກເຮົາຄາດຫວັງເພື່ອ**

› ການປ່ອຍອາຍກາກໂບນິກເປັນສູນໃນປີ 2040
› ກຳຈັດຂີ້ເຫຍື້ອໃຫ້ເປັນສູນພາຍໃນປີ  2025
› ການຕັດໄມ້ທຳລາຍປ່າເປັນສູນພາຍໃນ 2025

**ທ່ານສາມາດອ່ານຂໍ້ມູນເພີ່ມເຕີມກ່ຽວກັບເປົ້າໝາຍ ແລະ ການໃຫ້ຄຳໝັ້ນສັນຍາດ້ານສິ່ງແວດລ້ອມ ຢູ່ໃນຍຸດທະສາດນີ້ Imperial Brands ESG Strategy.**

**ພວກເຮົາຂໍໃຫ້ທ່ານ ຮ່ວມເດີນທາງໄປກັບພວກເຮົາ ເພື່ອລົດຜົນກະທົບຕໍ່ສິ່ງແວດລ້ອມ ຈາກທຸລະກິດຂອງພວກເຮົາ ໂດຍການຈັດການຜົນກະທົບຕໍ່ສິ່ງແວດລ້ອມຂອງທ່ານເອງຢ່າງມີຄວາມຮັບຜິດຊອບ. ໃນຖານະຜູ້ສະໜອງຂອງອິມພີຣຽວ, ທ່ານຕ້ອງປະຕິບັດຕາມມາດຖານເຫຼົ່ານີ້ ເປັນຢ່າງຕ່ຳ:**

- ປະຕິບັດຕາມກົດໝາຍ ແລະ ລະບຽບການຕ່າງໆດ້ານສິ່ງແວດລ້ອມ ທີ່ນຳໃຊ້ໃນທຸລະກິດຂອງທ່ານ.
- ດຳເນີນການແກ້ໄຂຕາມທີ່ຈຳເປັນ, ລາຍງານຫາພາກສ່ວນກ່ຽວຂ້ອງ ຖ້າຈຳເປັນ, ແລະ ແຈ້ງໃຫ້ພວກເຮົາຊາບກ່ຽວກັບເຫດການຕ່າງໆທີ່ກ່ຽວຂອງກັບທຸລະກິດຂອງພວກເຮົາ ຊຶ່ງອາດສົ່ງຜົນກະທົບດ້ານສິ່ງແວດລ້ອມ.
- ແຈ້ງໃຫ້ພວກເຮົາຊາບ ທຸກຂັ້ນຕອນ ຫຼື ເງື່ອນໄຂທີ່ກ່ຽວຂ້ອງກັບທຸລະກິດຂອງພວກເຮົາ ຊຶ່ງອາດທຳລາຍ ແລະ ສ້າງຜົນກະທົບບໍ່ດີຕໍ່ສິ່ງແວດລ້ອມ..



# ຄວາມຍືນຍົງທາງດ້ານສິ່ງແວດລ້ອມ

### ສິບຕໍປັບປຸງ: ຄວາມຍືນຍົງຂອງສິ່ງແວດລ້ອມ

**ພວກເຮົາສະໜັບສະໜຸນໃຫ້ທ່ານປະຕິບັດເກີດມາດຕະຖານຂັ້ນຕ່ຳຂອງພວກເຮົາ ແລະ ນຳໃຊ້ແນວຄິດສ້າງສັນເພື່ອບັນລຸເປົ້າໝາຍດ້ານສິ່ງແວດລ້ອມ ແລະ ປົກປັກຮັກສາໂລກຂອງພວກເຮົາ ໃນດ້ານຕ່າງໆຕໍ່ໄປນີ້:**

### ການປ່ອຍມົນລະພິດ

- ຫຼຸດການປ່ອຍມົນລະພິດໃນຂອບວຽກ 1, 2, ແລະ 3 ໃນການດຳເນີນທຸລະກິດ.

### ຂີ້ເຫຍື້ອ

- ຫຼຸດຜົນກະທົບຈາກຂີ້ເຫຍື້ອ ຕົ້ນເຫດມາຈາກການດຳເນີນທຸລະກິດຂອງທ່ານ.
- ອອກແບບຜະລິດຕະພັນທີ່ຄຳນຶງເຖິງການຫຼຸດຂີ້ເຫຍື້ອ.
- ເພີ່ມຄວາມສາມາດໃນການນຳມາໃຊ້ຄືນໃໝ່ຂອງບັນຈຸພັນ.
- ຫຼຸດຜ່ອນຂີ້ເຫຍື້ອທີ່ຕ້ອງຝັງດິນ ແລະ ຮັບປະກັນການກຳຈັດ ຫຼື ແປຮູບຂີ້ເຫຍື້ອຢ່າງປອດໄພ ແລະ ມີປະສິດຕິພາບ.

### ສ່ວນປະສົມ, ວັດສະດຸ ແລະ ວິທີການແບບຍືນຍົງ

- ຫຼຸດການເພິ່ງພາວັດສະດຸໃໝ່ໆຕະຫຼອດ ຍົກເວັ້ນໃນຍາມຈຳເປັນ.
- ຕິດຕາມ ແລະ ເພີ່ມປະສິດຕິພາບການນຳໃຊ້ຊັບພະຍາກອນທຳມະຊາດ.
- ແທນທີ່ສານເຄມີ ດ້ວຍສານທີ່ມາຈາກທຳມະຊາດ ໃນການກະເສດ ຫາກເປັນໄປໄດ້.
- ເຮັດວຽກຮ່ວມກັນກັບຜູ້ສະໜອງຂອງທ່ານເພື່ອຮັບປະກັນວ່າຊັບພະຍາກອນທຳມະຊາດຈະຖືກນຳໃຊ້ດ້ວຍຄວາມຮັບຜິດຊອບ.

### ການຕັດໄມ້ທຳລາຍປ່າ ແລະ ຄວາມຫຼາກຫຼາຍທາງຊີວະພັນ

- ຫຼຸດຜ່ອນຜົນກະທົບຈາກການຕັດໄມ້ທຳລາຍປ່າໃນການດຳເນີນທຸລະກິດຂອງທ່ານ.
- ສຳຫຼວດມາດຕະການໃນການອານຸລັກ ແລະ ເພີ່ມຄວາມຫຼາກລາຍທາງຊີວະພັນ ລວມໄປເຖິງການປ້ອງກັນສານສູນເສຍແຫຼ່ງທີ່ຢູ່ອາໃສ ແລະ ການຄຸ້ມຄອງສັດທີ່ໃກ້ສູນພັນ ຫຼື ສັດທີ່ຖືກຄຸກຄາມ.
- ຮັບປະກັນວ່າປະຕິບັດຕາມກົດໝາຍການກວດສອບສະຖານະການຕັດໄມ້ທຳລາຍປ່າທີ່ຖືກບັງຄັບໃຊ້ສຳລັບຜະລິດຕະພັນທີ່ມີຄວາມສ່ຽງຈາກການຕັດໄມ້ທຳລາຍປ່າ ແລະ ສ້າງຂະບວນການດຳເນີນການກວດສອບ ແລະ ຈັດການຄວາມສ່ຽງ ຫຼື ບັນຫາໃນການສະໜອງຊັບພະຍາກອນຂອງທ່ານ ໂດຍຄາດວ່າຈະມີກົດໝາຍກວດສອບສະຖານະໃໝ່.

### ນະໂຍບາຍ ການຕິດຕາມ ແລະ ການລາຍງານ

- ສ້າງນະໂຍບາຍ ແລະ ລະບົບບໍລິຫານສິ່ງແວດລ້ອມ.
- ກຳນົດຕົວຊີ້ວັດ ເພື່ອວັດແທກ, ຕິດຕາມ ແລະ ປັບປຸງການປະຕິບັດງານດ້ານສິ່ງແວດລ້ອມຢ່າງຕໍ່ເນື່ອງ ໂດຍສອດຄອງຕາມເປົ້າໝາຍໂດຍການສ້າງເປັນໂຄງການເຊັ່ນ: ໂຄງການວິທະຍາສາດອີງໃສ່ເປົ້າໝາຍ Science Based Targets.
- ຮ່ວມສົ່ງຜົນງານປະຈຳປີ ໃນໂຄງການເປີດເຜີຍກາກບອນ Carbon Disclosure Project.





# *ການກວດສອບ ແລະ ການປັບປຸງຢ່າງຕໍ່ເນື່ອງ*

**ພວກເຮົາຄາດຫວັງໃຫ້ຜູ້ສະໜອງຂອງພວກເຮົາຈັດຕັ້ງປະຕິບັດມາດຖານຕ່າງໆທີ່ໄດ້ລະບຸໄວ້ໃນກົດການປະພຶດນີ້. ໃນນີ້ແມ່ນລວມໄປເຖິງ ການຈັດໃຫ້ຂະບວນການຕ່າງໆ, ການຄວບຄຸມ ແລະ ການລາຍງານສາມາດວັດແທກຄວາມຄືບໜ້າໄດ້.**

ໃນນາມທີ່ເປັນສ່ວນໜຶ່ງຂອງແນວທາງປັບປຸງຢ່າງຕໍ່ເນື່ອງ ເພື່ອປະຕິບັດມາດຕະຖານຂອງພວກເຮົາ, ພວກເຮົາຈະຮ່ວມມືກັບທ່ານ ຕາມແຕ່ລະກໍລະນີ ເພື່ອປັບປຸງການປະຕິບັດງານ ແລະ ແກ້ໄຂສິ່ງທ້າທາຍຕ່າງໆ. ພວກເຮົາຈະບໍ່ຍອມຮັບ ຫຼື ເມີນເສີຍຕໍ່ທຸກກິດຈະກຳທີ່ສົ່ງໃສວ່າລະເມີດກົດປະພຶດດັ່ງກ່າວ.

## ໃນນາມຜູ້ສະໜອງຂອງອິມພີຣຽວແບຣນ, ທ່ານຖືກຄາດຫວັງໃຫ້:

- ຄວາມຮ່ວມມືໃນການທົບທວນຄືນວຽກທັງພາຍໃນ ແລະ ພາຍນອກ, ການປະເມີນຜົນ ຫຼື ການກວດສອບທີ່ໄດ້ຮັບການຮ້ອງຂໍຈາກທຸລະກິດຂອງທ່ານ ຊຶ່ງມັນກ່ຽວຂ້ອງກັບການປະຕິບັດຕາມກົດການປະພຶດ.
- ຮ່ວມມືກັບພວກເຮົາ ຕົກລົງ ແລະ ດຳເນີນການໃນເວລາທີ່ເໝາະສົມ ເພື່ອແກ້ໄຂ ຫຼື ຫຼຸດຜ່ອນບັນຫາຕ່າງໆ ເພື່ອພົບເຫັນ.

ຜູ້ສະໜອງຕ້ອງເຂົ້າໃຈວ່າການປະຕິບັດຕາມມາດຕະຖານທີ່ກຳນົດໄວ້ໃນກົດການປະພຶດ ແລະ ຄວາມເຕັມໃຈຂອງຜູ້ສະໜອງໃນການແກ້ໄຂຂໍ້ບົກຜ່ອງຕ່າງໆທັນທີ ຈະເປັນປັດໃຈສຳຄັນໃນການຕັດສິນໃຈວ່າພວກເຮົາຈະຮ່ວມມື ຫຼື ຮັກສາຄວາມສຳພັນທາງທຸລະກິດກັບຜູ້ສະໜອງຂອງອິມພີຣຽວ ຫຼືບໍ່. ໃນກໍລະນີທີ່ຊັດເຈນ, ຫາກບໍ່ສອດຄ່ອງກັບກົດການປະພຶດຈະຕ້ອງເປັນໄປຕາມຂໍ້ກຳນົດສຳລັບການແກ້ໄຂ ແລະ ອາດລວມໄປເຖິງການຍົກເລີກສັນຍາ.





# ການແຈ້ງເບາະແສ

**ພວກເຮົາສະໜັບສະໜູນຄວາມກ້າສະແດງຄຳຄິດເຫັນ ແລະ ຄວາມໂປ່ງໃສ ພາຍໃນອິມພີຣຽວແບຣນ ແລະ ລະຫວ່າງຜູ້ສະໜອງຂອງພວກເຮົາ ຖ້າທ່ານມີຄວາມກັງວົນ ແລະ ມີຂໍ້ສົງໃສ ທີ່ລະເມີດຕໍ່ກົດໝາຍ ຫຼື ກົດການປະພຶດຂອງຜູ້ສະໜອງ, ພວກເຮົາຢາກໃຫ້ທ່ານລາຍງານມັນອອກມາ.**

## ຕິດຕໍ່ຫາພວກເຮົາ:

ອມ່ພຣຽວ, 121 ຖືະໜົ້ນ, Winterstoke Road, Bristol
BS3 2LL, ປີ້ະເທົ່ດ United Kingdom
Tel: +44 (0) 117 963 6636
Email:SpeakUp@impbrands.com

ອມ່ພຣຽວ ITG Brands ຕສີ່າຍລົາຍງານ :

ເວາອອກມຸ່າ  ITG Brands Speaking Up
714 Green Valley Road
Greensboro, NC 27408
Tel: 866-447-6092

### ການແຈ້ງເບາະແສ

ແຈ້ງບັນຫາຂໍ້ກັງວົນຂອງທ່ານແບບບໍ່ເປີດເຜີຍຕົວຕົນ
ໂດຍນຳໃຊ້ການແຈ້ງເບາະແສທາງອອ່ນລາຍ  Speaking Up.
ນະໂຍບາຍການແຈ້ງເບາະແສຂອງພວກເຮົາ Speaking Up
ສະໜອງວິທີການສຳລັບການລາຍງານຄວາມກັງວົນ ແລະ ຂໍ້ມູນຕ່າງໆ ທີ່ບໍ່ມີການຕອບໂຕ້ຄືນ.

ກ້ານແຈງເບາະແສ່າ

### ຂໍ້ມູນເພີ່ມເຕີມ ແລະ ແຫຼ່ງຂໍ້ມູນ

ເບິ່ງທີ່ເວັບໄຊຂອງອິມພີຣຽວ  www.imperialbrandsplc.com



